ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: ..0.8..23../ສ.ອ.ນ
ນະຄອນຫຼວງວຽງຈັນ,ວັນທີ 17 ສິງຫາ 2023

## ໜັງສືແຈ້ງການ

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ແລະ ຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິຂອງກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 03 ປະຈຳປີ 2023 ຄັ້ງວັນທີ 16/08/2023 ກ່ຽວກັບ ການລາອອກ ແລະ ການແຕ່ງຕັ້ງ ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ.

- ອີງຕາມ ມະຕິຂອງກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 03/2023 ເລກທີ 0820 ລົງວັນທີ 16/08/2023.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ອ.ນ) ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 03/2023 ວັນທີ 16/08/2023 ກ່ຽວກັບການລາອອກ ແລະ ການແຕ່ງຕັ້ງ ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ ສ.ອ.ນ ດັ່ງນີ້:

1. ຮັບຮອງການລາອອກຈາກການເປັນສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ ຂອງ **ທ່ານ ບຸນເຕີມ ກິມມິດຕະພາບ** ຕາມໜັງສືລາອອກ, ສະບັບລົງວັນທີ 30 ມິຖຸນາ 2023.
2. ຮັບຮອງການແຕ່ງຕັ້ງ **ທ່ານ ສອນສະຫວັນ ແສງອະໄພ** ເປັນ ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ. (ຊີວະປະຫວັດຫຍໍ້ຕາມເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທຸກທ່ານເພື່ອຮັບຊາບດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ
**ຜູ້ອຳນວຍການໃຫຍ່**
**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

**ທ່ານ ວັດດານາ ສຸຄະບັນດິດ**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

# ຊີວະປະຫວັດຫຍໍ້

➢ **ຊີວະປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ**



## ຊື່ ແລະ ນາມສະກຸນ

ທ່ານ ສອນສະຫວັນ ແສງອະໄພ

ສັນຊາດ : ລາວ

ວັນເດືອນປີເກີດ : 30 ມິຖຸນາ 1960

ສາສະໜາ : ພຸດ

ທີ່ຢູ່ປະຈຸບັນ : ບ້ານໂພນສະຫວາດໃຕ້, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ

**ຕຳແໜ່ງ** : ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ

## ວຸດທິການສຶກສາ

- ປະລິນຍາໂທ ກົດໝາຍ (ກົດໝາຍພາຍໃນຈາກມະຫາໄລແຫ່ງຊາດລັດຕັດຊິກກິດສະຖານອະດີດສະຫະພາບໂຊວຽດ), ປີ 1993
- ປະລິນຍາໂທ ກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2009

## ປະຫວັດການເຮັດວຽກ

- ວິຊາການ ກະຊວງຍຸຕິທຳ ປີ 1982-1985;
- ຈ່າສານ ພະແນກຍຸຕິທຳ ແຂວງວຽງຈັນ (ສານປະຊາຊົນ ແຂວງວຽງຈັນ) ປີ 1985-1987;
- ສຶກສາຢູ່ມະຫາໄລແຫ່ງຊາດ ລັດຕັດຊິກກິດສະຖານ (ອາດີດສະຫາພາບໂຊວຽດ) ປີ 1988-1993;
- ວິຊາການ ອົງການໄອຍະການປະຊາຊົນສູງສຸດ ປີ 1993-1995;
- ຫົວໜ້າອົງການໄອຍະການ ໄອຍະການເມືອງ ອົງການໄອຍະການ ເມືອງ ສີໂຄດຕະບອງ ປີ 1995-1998;
- ພະນັກງານສອບສວນ, ຮອງຫົວໜ້າພະແນກ ອົງການໄອຍະການປະຊາຊົນສູງສຸດ ປີ 1998-2001;
- ຫົວໜ້າພະແນກຢູ່ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ ປີ 2001-2004;
- ຮອງຫົວໜ້າ ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດປີ 2004-2009;
- ຮຽນຕໍ່ປະລິນຍາໂທກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2005-2009;

- ຫົວໜ້າກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ ປີ 2009-2015;
- ຫົວໜ້າກົມກວດກາ ອົງການໄອຍະການປະຊາຊົນສູງສຸດ ປີ 2015-2021;
- ເຂົ້າບໍານານ ວັນທີ 01/07/2021;
- ທະນາຍຄວາມ (ສະມາຊິກສະພາທະນາຍຄວາມລາວ) ວັນທີ 10/09/2022;
- ທີ່ປຶກສາ ບໍລິສັດຮຸ່ງເຮືອງຄຸນນະທໍາທີ່ປຶກສາກົດໝາຍຈໍາກັດ ວັນທີ 01/07/2021-ເຖິງປະຈຸບັນ.